City of Seattle

# ຂໍ້ກຳນົດເລື່ອງຖົງ




## ກົດໝາຍເມືອງຊີແອັດເທິລກຳນົດຫຍັງແດ່:

| ຖົງຫິ້ວ ຖົງໃສ່ເຄື່ອງທີ່ເປັນປລັສຕິກ | ຖົງເຈ້ຍຂະໜາດໃຫຍ່ ຖົງໃສ່ເຄື່ອງ | ຖົງເຈ້ຍຂະໜາດນ້ອຍກວ່າ | ຖົງປລັສຕິກຂຽວ* (ເຊັ່ນວ່າ ຖົງໃສ່ຜັກໝາກໄມ້) | ຖົງໃສ່ຜັກໝາກໄມ້/ ຖົງໃສ່ອາຫານຈຳນວນຫຼາຍທີ່ເປັນປລັສຕິກໃສ |
| --- | --- | --- | --- | --- |
|   |   |   |   |  |
| | 5¢ (ຈຳເປັນຕ້ອງຄິດຄ່າທຳນຽມຕ່ຳສຸດ.) | ຟຣີ (ຄ່າທຳນຽມເລືອກໄດ້.) | *ຂໍ້ກຳນົດມີຜົນນຳໃຊ້ແຕ່ ວັນທີ 1 ກໍລະກົດ 2017 | ອະນຸຍາດ |

## ຮ້ານຄ້າໃນເມືອງຊີແອັດເທິລ:

- ອາດຈະບໍ່ໃຫ້ຖົງຫິ້ວ (ຖົງໃສ່ເຄື່ອງ) ທີ່ເປັນປລັສຕິກ ຫຼື ຍ່ອຍສະຫຼາຍໄດ້ແບບໃຊ້ຄັ້ງດຽວ ຫຼື ຖົງທີ່ຕິດສະຫຼາກ "ຍ່ອຍສະຫຼາຍໄດ້ຕາມທຳມະຊາດ" "ຍ່ອຍສະຫຼາຍໄດ້", "ເນົ່າເປື່ອຍໄດ້" ຫຼື ຄ້າຍຄືກັນ ໃຫ້ແກ່ລູກຄ້າ.
- ອາດຈະບໍ່ໃຫ້ຖົງປລັສຕິກແກ່ລູກຄ້າ (ເຊັ່ນວ່າ ຖົງໃສ່ຜັກແລະໝາກໄມ້) ທີ່ຍ້ອມສີຂຽວ ຫຼື ສີນ້ຳຕານ.* ຮ້ານຄ້າສາມາດໃຫ້ຖົງຍ່ອຍສະຫຼາຍທີ່ໄດ້ຮັບອະນຸມັດ ແລະ ພວກມັນຕ້ອງມີສີຂຽວ ຫຼື ສີນ້ຳຕານ*.
- ອາດຈະໃຫ້ຖົງເຈ້ຍທີ່ນຳກັບມາໃຊ້ໃໝ່ໄດ້ ຫຼື ຖົງຫິ້ວແບບໃຊ້ໃໝ່ໄດ້ທຸກຂະໜາດ. ຮ້ານຄ້າຕ້ອງຄິດຄ່າຖົງເຈ້ຍຕ່ຳສຸດ 5 ເຊັນສຳລັບຖົງເຈ້ຍໃຫຍ່ຂະໜາດ 1/8 ຖັງໄມ້ (ຖົງເຈ້ຍຂະໜາດ 882 ຄິວບິກນິ້ວ ຫຼື ໃຫຍ່ກວ່າ).
  - ຄ່າຖົງເຈ້ຍຕ້ອງສະແດງຢູ່ໃນໃບຮັບເງິນຂອງລູກຄ້າ. ນຳໃຊ້ອາກອນຍອດຂາຍ. ຮ້ານຄ້າເກັບຮັກສາຄ່າທຳນຽມຖົງເຈ້ຍໄວ້.
  - ຖົງເຈ້ຍໃຫຍ່ທີ່ລູກຄ້າຖືກເກັບຄ່າຕ້ອງປະກອບມີເສັ້ນໃຍທີ່ນຳກັບມາໃຊ້ໃໝ່ຫຼັງການຊົມໃຊ້ຢ່າງໜ້ອຍ 40 ເປີເຊັນ ແລະ ສ່ວນປະກອບເສັ້ນໃຍທີ່ນຳກັບມາໃຊ້ໃໝ່ຕ່ຳສຸດຕ້ອງຖືກພິມໄວ້ຢູ່ດ້ານນອກຂອງຖົງ.
  - ສົ່ງເສີມໃຫ້ມີສ່ວນປະກອບເສັ້ນໃຍ ແລະ ການຕິດສະຫຼາກສຳລັບຖົງເຈ້ຍທຸກຂະໜາດ.
  - ຮ້ານຄ້າອາດຈະໃຫ້ຖົງເຈ້ຍຂະໜາດນ້ອຍກວ່າຟຣີ ຫຼື ເກັບເງິນນຳລູກຄ້າສຳລັບຖົງດັ່ງກ່າວກໍໄດ້.
- ຖົງປລັສຕິກໜາ 2.25 ມິນ ຫຼື ໜາກວ່າຖືວ່າເປັນຖົງທີ່ສາມາດນຳກັບມາໃຊ້ໃໝ່ໄດ້. ຮ້ານຄ້າອາດຈະໃຫ້ຖົງຟຣີ ຫຼື ເກັບເງິນນຳລູກຄ້າສຳລັບຖົງດັ່ງກ່າວກໍໄດ້.

*ຂໍ້ກຳນົດມີຜົນນຳໃຊ້ແຕ່ວັນທີ 1 ກໍລະກົດ 2017

Seattle Public Utilities

ຂໍ້ຍົກເວັ້ນ ແລະ ລາຍລະອຽດເພີ່ມເຕີມ

# ຂໍ້ຍົກເວັ້ນ ແລະ ຂໍ້ມູນ

## ຂໍ້ຍົກເວັ້ນຈາກການຫ້າມ:

- ລູກຄ້າທີ່ໃຊ້ໃບແລກຊື້ ຫຼື ບັດເງິນຊ່ວຍເຫຼືອຈາກໂຄງການຊ່ວຍເຫຼືອອາຫານຂອງລັດຖະບານກາງ ໄດ້ຮັບຍົກການຍົກເວັ້ນຈາກການຄິດຄ່າຖົງເຈ້ຍຂະໜາດໃຫຍ່ 5 ເຊັນ.
- ຖົງປລັສຕິກທີ່ໃຊ້ໃນຮ້ານຄ້າສຳລັບສິ່ງຂອງຈຳນວນຫຼາຍ ຫຼື ເພື່ອປົກປ້ອງຜັກ, ຊີ້ນ, ອາຫານແຊ່ແຂງ, ດອກໄມ້ ແລະ ສິ່ງຂອງຄ້າຍຄືກັນ ແມ່ນໄດ້ຮັບການຍົກເວັ້ນ. ຖົງປລັສຕິກບໍ່ສາມາດຖືກຍ້ອມສີຂຽວ ຫຼື ສີນ້ຳຕານໄດ້.* ຖົງຍ່ອຍສະຫຼາຍໄດ້ທີ່ອະນຸມັດເທົ່ານັ້ນຈຶ່ງໄດ້ຮັບອະນຸຍາດສຳລັບຈຸດປະສົງເຫຼົ່ານີ້.
- ອະນຸຍາດຖົງປລັສຕິກ ຫຼື ຖົງຍ່ອຍສະຫຼາຍໄດ້ທີ່ໄດ້ຮັບອະນຸມັດທີ່ໃຊ້ສຳລັບສັ່ງຊື້ອາຫານກັບບ້ານຈາກຮ້ານອາຫານ.
- ອະນຸຍາດຖົງໃສ່ນ້ຳຢາທຳຄວາມສະອາດແຫ້ງ, ໜັງສືພິມ ແລະ ຖົງແຂວນປະຕູ ທີ່ເປັນປລັສຕິກ ແຕ່ບໍ່ສາມາດຍ້ອມສີເປັນສີຂຽວ ຫຼື ສີນ້ຳຕານໄດ້.*

### ຖົງທີ່ຍັງໄດ້ຮັບອະນຸຍາດໃຫ້ໃຊ້ຢູ່



ຖົງໃສ່ຜັກໝາກໄມ້/ຊີ້ນ

ຖົງໃສ່ອາຫານຈຳນວນຫຼາຍ



ຖົງໃສ່ໜັງສືພິມ

ຖົງໃສ່ສານທຳຄວາມສະອາດແຫ້ງ



ຖົງແຂວນປະຕູ

ຖົງໃສ່ອາຫານຕໍ່ກັບບ້ານ

ຖົງເຈ້ຍ

## ສົ່ງເສີມ:

### ເລືອກຖົງທີ່ໃຊ້ໃໝ່ໄດ້

- ຖົງແບບໃຊ້ເທື່ອດຽວແມ່ນສິ້ນເປືອງ. ພວກມັນຍັງໄປອຸດຕັນຮ່ອງລະບາຍນ້ຳພະຍຸ, ເຮັດໃຫ້ຖະໜົນຮົກເຮື້ອ, ສ້າງມົນລະພິດຕໍ່ແຫຼ່ງນ້ຳຂອງພວກເຮົາ, ປົນເປື້ອນປຸ໋ຍທຳມະຊາດ ແລະ ສ້າງຂີ້ເຫຍື້ອເພີ່ມຂຶ້ນ.




*ຂໍ້ກຳນົດມີຜົນນຳໃຊ້ແຕ່ວັນທີ 1 ກໍລະກົດ 2017

Seattle Public Utilities

የአስተርጓሚ አገልግሎት ለማግኘት በ 206-684-3000 ይደውሉ።
如需口譯服務請電 206-684-3000。
통역 서비스를 원하시면 206-684-3000 번으로 전화해 주십시오.
Wixii adeegyada turjubaanka fadlan wac 206-684-3000.
Para servicios de traducción, por favor llame al 206-684-3000.
Para sa serbisyo ng tagapagpaliwanag, tumawag sa 206-684-3000.
Muốn yêu cầu dịch vụ thông dịch xin gọi số 206-684-3000.

**ສຳລັບຂໍ້ມູນເພີ່ມເຕີມ: www.seattle.gov/plasticbagban** **206-684-3000**